Washington State Department of Social & Health Services
Transforming lives

ABLE BODIED ADULT WITHOUT DEPENDENTS (ABAWD)

# ກົດກຳນົດຂອງເງື່ອນໄຂຮັບເອົາການຊ່ວຍເຫລືອອາຫານຈຳເປັນ: ສິ່ງທີ່ທ່ານຄວນຈະຮູ້ຈັກເພື່ອຈະຮັກສາການຊ່ວຍເຫລືອຂອງທ່ານໄວ້

# Basic Food Eligibility Requirements: What You Need to Know to Keep Your Benefits

## ການຊ່ວຍເຫລືອຂອງທ່ານແມ່ນຖືກຈຳກັດເວລາຖ້າຫາກວ່າທ່ານບໍ່ເຮັດວຽກ

ພວກເຮົາຖືວ່າເປັນຜູ້ໃຫຍ່ທີ່ມີຮ່າງກາຍສາມາດເຮັດວຽກໄດ້ໂດຍປາສຈາກເດັກນ້ອຍຫວັງເພິ່ງ (ABAWD) ສຳລັບໂຄງການອາຫານຈຳເປັນ ຍ້ອນວ່າທ່ານສາມາດເຮັດວຽກໄດ້ ແລະ ບໍ່ມີເດັກນ້ອຍຢູ່ໃນຄອບຄົວຂອງທ່ານ.

ທ່ານສາມາດໄດ້ຮັບການຊ່ວຍເຫລືອອາຫານຈຳເປັນສຳລັບສາມເດືອນອອກຈາກທຸກໆ 36 ເດືອນ ຖ້າຫາກວ່າທ່ານບໍ່ສອດຄ່ອງນຳກົດກຳນົດຂອງວຽກງານ.

## ຈະຮັກສາການຊ່ວຍເຫລືອອາຫານຈຳເປັນຂອງທ່ານໄວ້ໄດ້ແນວໃດ

ທ່ານຕ້ອງໄດ້ເຮັດແນວນຶ່ງ ຫລື ຫລາຍແນວ ຂອງກິຈກັມຕໍ່ລົງໄປນີ້ເພື່ອຈະຮັກສາການຊ່ວຍເຫລືອອາຫານຂອງທ່ານໄວ້ຫລາຍກວ່າສາມເດືອນ:

- ເຮັດວຽກອາສາສະມັກໃຫ້ແລ້ວໂດຍຜ່ານໂຄງການ Workfare ແຕ່ລະເດືອນ. ການຊ່ວຍເຫລືອປະຈຳເດືອນຂອງທ່ານຈະຄິດໄລ່ຈຳນວນຊົ່ວໂມງທີ່ທ່ານຕ້ອງອາສາສະມັກເພື່ອຈະຮັກສາການຊ່ວຍເຫລືອອາຫານຂອງທ່ານໄວ້.
- ເຮັດວຽກຢ່າງຫນ້ອຍ 20 ຊົ່ວໂມງຕໍ່ອາທິດ ຫລື 80 ຊົ່ວໂມງຕໍ່ເດືອນຕາມການໄລ່ສະເລັ່ຽ.
- ເຂົ້າຮ່ວມນຳໃນໂຄງການວຽກງານ ຫລື ການຝຶກອົບຮົມທີ່ຖືກອະນຸມັດຂອງຣັດເຊັ່ນວ່າ:
    - ໂຄງການວຽກງານ ແລະ ການຝຶກອົບຮົມຂອງການຊ່ວຍເຫລືອອາຫານຈຳເປັນ (BFET). ເພື່ອຣາຍຣະອຽດເພີ້ມເຕີມຈົ່ງໄປທີ່ www.dshs.wa.gov/bfet;
    - ໂຄງການທີ່ຖືກລວມຢູ່ໃນ Workforce Innovation and Opportunity Act (WIOA). ເພື່ອຣາຍຣະອຽດເພີ້ມເຕີມຈົ່ງໄປທີ່ https://www.dshs.wa.gov/esa/community-services-offices/wioa;
    - ໂຄງການ AmeriCorps VISTA.

## ອຸບປະສັກຕໍ່ການເຂົ້າຮ່ວມ

ຈົ່ງຕິດຕໍ່ຫາພວກເຮົາຖ້າຫາກວ່າທ່ານບໍ່ສາມາດທີ່ຈະເຂົ້າຮ່ວມໄດ້ຢ່າງຫນ້ອຍຊົ່ວໂມງ 80 ຕໍ່ເດືອນຍ້ອນວ່າທ່ານ:

- ເສັຽອົງຄະທາງຮ່າງກາຍ, ຫລື ທາງຈິດໃຈ;
- ໄດ້ຮັບເງິນສະວັດດີການຈາກ Labor & Industries (L&I), Veterans Administration, ຫລື ປະກັນພັຍຄວາມເສັຽອົງຄະເອກຊົນ;
- ອາສັຍຢູ່ໃນສະພາບທີ່ເປັນສິ່ງກີດກັ້ນຕໍ່ວຽກງານ;
- ເບິ່ງແຍງດູແລບຸກຄົນຜູ້ທີ່ບໍ່ສາມາດບົວຣະບັດຕົນເອງໄດ້ຍ້ອນອາຍຸ ຫລື ຄວາມເສັຽອົງຄະ;
- ເຂົ້າຮ່ວມໃນການປິ່ນປົວການຕິດຢາເສບຕິດ ຫລື ໂຄງການປິ່ນປົວໃຫ້ດີຄືນ;
- ສະມັກຂໍເອົາ ຫລື ໄດ້ຮັບເງິນວ່າງງານ;
- ຈົດຊື່ເຂົ້າໂຮງຮຽນຢ່າງຫນ້ອຍເຄິ່ງເວລາ; ຫລື
- ໄດ້ຮັບເງິນຊ່ວຍເຫລືອອົພຍົບ ຫລື ເງິນທຶນທຽບເທົ່າກັນ;ຫລື
- ເຂົ້າຮ່ວມນຳແນວທາງ LEP ຫລື ໂຄງການ CLEVER.

## ສິ່ງທີ່ທ່ານຕ້ອງໄດ້ລາຍງານ

ທ່ານຕ້ອງໄດ້ບອກພວກເຮົາຖ້າຫາກວ່າ:

- ທ່ານບໍ່ສາມາດທຳໃຫ້ສຳເຣັດໃນຈຳນວນຊົ່ວໂມງຂອງການເຂົ້າຮ່ວມທີ່ຕ້ອງໄດ້ເຮັດຢູ່ໃນເດືອນນຶ່ງ.
- ວຽກຂອງທ່ານລຸດລົງຕ່ຳກວ່າ 20 ຊົ່ວໂມງຕໍ່ອາທິດ.
- ຣາຍໄດ້ຂອງຄອບຄົວຂອງທ່ານກາຍເກີນຂອບເຂດຢູ່ໃນກົດຫມາຍ WAC 388-478-0060.
- ທ່ານ ຫລື ສະມາຊິກຂອງຄອບຄົວຂອງທ່ານໄດ້ຮັບເງິນຣາງວັນຈາກລໍເຕີຣີ ຫລື ການພະນັນໃນເກມດຽວເທົ່າທຽມກັບ ຫລື ກາຍເກີນຂອບເຂດຢູ່ໃນກົດຫມາຍ WAC 388-470-0006(8)(a).

ທ່ານສາມາດຊອກຫາຣາຍຣະອຽດເພີ້ມເຕີມກ່ຽວກັບກົດກຳນົດຂອງໂຄງການ ABAWD ໄດ້ຢູ່ທີ່ www.dshs.wa.gov/abawd.

ໂທຫາພວກເຮົາໄດ້ທີ່ 1-877-501-2233 ຖ້າຫາກວ່າທ່ານມີຄຳຖາມ, ຕ້ອງການຄວາມຊ່ວຍເຫລືອນຳການຕິດຕໍ່ຫາໂຄງການຝຶກຝົນ, ຫລື ຕ້ອງການຢາກຈະລາຍງານການປ່ຽນແປງ.

ທ່ານຍັງສາມາດຢ້ຽມຢາມພວກເຮົາໄດ້ທີ່ www.washingtonconnection.org ເພື່ອຈະຂໍເອົາການຊ່ວຍເຫລືອ, ສົ່ງໃບທວນຄືນເຂົ້າມາ ຫລື ລາຍງານການປ່ຽນແປງ.